# ບົດຂ່າວ

## ພິທີລົງນາມການຮ່ວມມືລະຫວ່າງ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ປະຕູຄຳ ຈຳກັດ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT)

ນະຄອນຫຼວງວຽງຈັນ, ວັນທີ: 28/07/2017




ວັນທີ 28 ກໍລະກົດ 2017, ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ (ທຄຕລ) ມະຫາຊົນ ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບຝາກເງິນ (ສກຈຮ) ປະຕູຄຳ ຈຳກັດ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT) ການລົງນາມໃນຄັ້ງນີ້, ແມ່ນລົງນາມໂດຍທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ນ. ຂັນມະນີ ສຸທຳມະວົງ, ຜູ້ອຳນວຍການສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ປະຕູຄຳ ຈຳກັດ. ເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະອຳນວຍການ ຄະນະພະແນກ, ຄະນະສູນ ແລະ ສາຂາ ພາຍໃນນະຄອນຫຼວງ ຂອງ ທຄຕລ, ຄະນະສະພາ ສກຈຮ ປະຕູຄຳ, ຄະນະອຳນວຍການ ສກຈຮ ປະຕູຄຳ, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍກໍໄດ້ເຂົ້າຮ່ວມເປັນສັກຂີພະຍານໃນຄັ້ງນີ້.




ການບໍລິການຊໍາລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການທໍາອິດໃນປີ 2009 ແລະ ເປັນບໍລິການທີ່ໄດ້ມີການຊົມໃຊ້ຫຼາຍ. ມາຮອດປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການຊໍາລະຄ່າສາທາລະນຸປະໂພກຮ່ວມກັບ 14 ພາກສ່ວນ ໃນນັ້ນປະກອບມີ: ການຊໍາລະຄ່າໄຟຟ້າ, ຄ່ານໍ້າປະປາ, ຄ່າໂທລະສັບ, ພາສີ-ອາກອນ, ຄ່າເຊົ່າສາຍເຄເບີ້ນ, ຄ່ານໍ້າມັນເຊື້ອໄຟ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທ ແຫ່ງທີ 1 ແລະ ຊໍາລະຄ່າງວດເຊົ່າສິນເຊື່ອ. ປະຈຸບັນ ທຄຕລ ມີ 19 ສາຂາ, 82 ໜ່ວຍບໍລິການ, 15 ຫ້ອງແລກປ່ຽນ, ມີຕູ້ ATM 344 ເຄື່ອງທົ່ວປະເທດ, ທຄຕລ ໄດ້ມີການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານບໍລິການໃຫ້ມີຄວາມທັນສະໄໝ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຊໍາລະສະສາງ ແລະ ການເຮັດທຸລະກໍາທາງດ້ານການເງິນຕ່າງໆ ໂດຍລູກຄ້າເອງ ບໍ່ຈໍາເປັນຕ້ອງເຂົ້າມາທະນາຄານ.

ສັນຍາວ່າດ້ວຍການຮ່ວມມືການຊໍາລະຄ່າບໍລິການຜ່ານ ທຄຕລ (Bill Payment) ລະຫວ່າງ ທຄຕລ ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ປະຕູຄໍາ ຈໍາກັດ ແມ່ນເພື່ອອໍານວຍຄວາມສະດວກຫຼາຍຂຶ້ນ ໃຫ້ແກ່ການຊໍາລະຄ່າງວດເງິນກູ້ ຂອງບັນດາລູກຄ້າ ສກຈຮ ປະຕູຄໍາ ຈໍາກັດ ຜ່ານ ທຄຕລ. ເຊິ່ງໃນເບື້ອງຕົ້ນການບໍລິການແມ່ນສາມາດຊໍາລະຜ່ານເຄົ້າເຕີ້ (Counters) ຈຸດບໍລິການ ຂອງ ສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ ທົ່ວລະບົບຂອງ ທຄຕລ. ນອກຈາກນີ້, ຍັງສາມາດຊໍາລະຜ່ານຜະລິດຕະພັນ ອີເລັກໂທຼນິກ ຂອງ ທຄຕລ ໄດ້ເຊັ່ນຜ່ານ BCEL One ແລະ BCEL I-Bank. ໃນອະນາຄົດ ທຄຕລ ຈະມີການພັດທະນາໃຫ້ ສາມາດຊໍາລະຜ່ານຕູ້ ATM ແລະ SMS Banking ໄດ້.

**ຂໍ້ມູນເພີ່ມຕື່ມ:**
ໂທ: (+856 21) 213200 ຕໍ່ 629 ຫຼື ໂທສາຍດ່ວນຂອງ ທຄຕລ: ໂທ 1555
Facebook: BCEL Bank, Website: www.bcel.com.la